FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື
ພະແນກພະລັງງານ ແລະ ບໍ່ແຮ່

ອັດຕະປື, ວັນທີ: 12 ພຶດສະພາ 2022

# ໜັງສືລາຍງານ

**ຮຽນ: ທ່ານຮອງເຈົ້າແຂວງ ຫົວໜ້າຄະນະຊີ້ນຳ ທີ່ເຄົາລົບ ແລະ ນັບຖືຢ່າງສູງ !.**
**ທ່ານ ຫົວໜ້າພະແນກ ພບ ຮອງຫົວໜ້າຄະນະຊີ້ນຳ ທີ່ເຄົາລົບ ແລະ ນັບຖືຢ່າງສູງ!.**
**ເລື່ອງ: ຂໍລາຍງານຜົນຂອງການລົງປະຊາມະຕິຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ຜົນລະປູກ.**

- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ສະບັບ, ເລກທີ: 1105/ພບ, ລົງວັນທີ: 21 ພຶດສະພາ 2018, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກພະລັງງານ ແລະ ບໍ່ແຮ່ ປະຈຳ ແຂວງ ອັດຕະປື.
- ອີງຕາມ ຂໍ້ຕົກລົງ ຂອງທ່ານຮອງເຈົ້າແຂວງອັດຕະປື, (ຜູ້ປະຈຳການ), ເລກທີ: 307/ຈຂ.ອປ ລົງວັນທີ: 07 ມີນາ 2022, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງ, ຕິດຕາມ, ປະສານງານ ແລະ ຊຸກຍູ້ໂຄງການກໍ່ສ້າງ ໂຮງງານຜະລິດໄຟຟ້າຈາກກັງຫັນລົມຂະໜາດກຳລັງຕິດຕັ້ງ 600MW, (ສະຖານີ 115kV, ຢູ່ບ້ານດາກນຶງ ແລະ ສາຍສົ່ງ 115kV), ເລີ່ມແຕ່ເຂດ ເມືອງດາກຈຶງ ແຂວງເຊກອງຜ່ານ 8 ບ້ານຄື: ບ້ານດາກນຶງ, ດາກສະມໍ, ດາກຍຶກ ດາກສຽດ, ດາກຊຶມ, ດາກດໍ, ດາກປາດຸກ ແລະ ນ້ຳງອນເໜືອ ເມືອງຊານໄຊ ແຂວງອັດຕະປື.
- ອີງຕາມ ໜັງສືສະເໜີຂອງ ບໍລິສັດ Impact Energy Asia Development Lited Co.Ltd , ເລກທີ: IMADOG023/22, ລົງວັນທີ: 18 ມີນາ 2022.

## I. ຈຸດປະສົງ:

ລົງປະຊາມະຕິຫົວໜ່ວຍລາຄາຫົວໜ່ວຍຊົດເຊີຍຄ່າເສຍຫາຍທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກຕ່າງໆ ຂອງປະຊາຊົນ, ທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງໂຮງຜະລິດໄຟຟ້າຈາກກັງຫັນລົມຂະໜາດກຳລັງຕິດຕັ້ງ 600 MW (ສະຖານີ 115 kV, ຢູ່ບ້ານດາກນຶງ ແລະ ສາຍສົ່ງ 115 kV), ເລີ່ມແຕ່ເຂດເມືອງດາກຈຶງ ແຂວງເຊກອງ ຜ່ານ 8 ບ້ານຄື: ບ້ານດາກນຶງ, ບ້ານດາກສະມໍ, ດາກຍຶກ, ດາກສຽດ, ດາກຊຶມ, ດາກດໍ, ດາກປາດຸກ ແລະ ນ້ຳງອນເໜືອ ເມືອງຊານໄຊ ແຂວງອັດຕະປື.

## II. ການຈັດຕັ້ງປະຕິບັດ.

ຄະນະກຳມະການຂັ້ນແຂວງ, ເມືອງໄດ້ເຕົ້າໂຮມປະຊາຊົນ ແລະ ອຳນາດການປົກຄອງບ້ານລວມຜູ້ທີ່ຖືກຜົນກະທົບຈາກໂຄງການໂຄງການກໍ່ສ້າງໂຮງຜະລິດໄຟຟ້າຈາກກັງຫັນລົມເພື່ອຮັບຟັງ ແລະ ມີຄຳຄິດຄຳເຫັນ.

## III. ເນື້ອໃນ:

ໃນວັນທີ 30-31 ມີນາ ຫາ ວັນທີ 1-2 ເມສາ 2022, ທາງຄະນະກຳມະການຄະນະພາກລັດຂັ້ນແຂວງ, ເມືອງ ແລະ ບ້ານ, ລົງປະຊາມະຕິຫົວໜ່ວຍລາຄາຊົດເຊີຍຜົນກະທົບກັບ ປະຊາຊົນ ທີ່ໄດ້ຮັບກະທົບຈາກໂຄງການຜະລິດພະລັງງານຈາກກັງຫັນລົມທີ່ມີຂະໜາດກຳລັງຕິດຕັ້ງຂະໜາດ 600MW, ຢູ່ເມືອງຊານໄຊ ແຂວງອັດຕະປື, ເຊິ່ງນຳພາໂດຍ ທ່ານ ສາຍທະລາ ໂສທິດາ ຮອງເຈົ້າເມືອງຊານໄຊ, (ຮອງອານຸກຳມະການ ປະສານງານໂຄງການ ແລະ ຊົດເຊີຍຜົນກະທົບຂັ້ນເມືອງ).

## IV. ຜົນທີ່ໄດ້ຮັບ:

ແຜນການລົງປະຊາມະຕິລາຄາຫົວໜ່ວຍຊົດເຊີຍຄ່າເສຍຫາຍທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກຕ່າງໆ ຂອງ

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

ປະຊາຊົນທີ່ຖືກຜົນກະທົບດັ່ງກ່າວ, ແມ່ນມີຈຳນວນບ້ານເປົ້າໝາຍທີ່ຖືກກະທົບມີຈຳນວນ 8 ບ້ານ, ເຊິ່ງແຕ່ລະບ້ານມີຄືດັ່ງນີ້:

**1. ບ້ານດາກນີງ.**

ຖືກຜົນກະທົບຈາກແລວສາຍສົ່ງໄຟຟ້າແຮງສູງຂະໜາດ 115kV, ຜ່ານ ແລະ ຕົ້ນເສົາຈຳນວນ 2 ຕົ້ນຖືກດິນລອມບ້ານ ແລະ ດິນທຳການຜະລິດຂອງປະຊາຊົນຈຳນວນ 1 ຕອນ (ດິນສວນເຊືອ), ທາງຄະນະກຳມະການຄະນະພາກລັດຂັ້ນແຂວງ, ເມືອງ ໄດ້ເຜີຍແຜ່ຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ພືນລະປູກ, ຕໍ່ອຳນາດການປົກຄອງບ້ານ ແລະ ຄອບຄົວຜູ້ທີ່ໄດ້ຮັບຜົນກະທົບເບື້ອງຕົ້ນມີ 1 ຄອບຄົວ, ກອງປະຊຸມໄດ້ເຫັນດີເປັນເອກະພາບຕາມຮ່າງຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ພືນລະປູກ.

- ➢ ຂໍ້ສະເໜີ ຈາກປະຊາຊົນ ແລະ ອຳນາດການປົກຄອງບ້ານ, ຕົ້ນກາເຟ 2 ປີລົງມາລາຄາ 15.000 ກີບ, ແມ່ນເຫັນດີ. ສຳລັບ 2 ປີຂຶ້ນໄປແມ່ນເຫັນດີໃຫ້ມີການປັບປຸງລາຄາ (ຕົ້ນໃຫຍ່ເກັບຜົນຜະລິດ).
- ກາເຟນ້ອຍ ລາຄາ 90.000 ກີບ.
- ກາເຟໃຫຍ່ ລາຄາ 100.000 ກີບ.
- ຕົ້ນກ້ວຍມີການປັບປຸງ 50.000 ກີບ.
- ສຳພາກການສະເໜີ ຕໍ່ ບໍລິສັດ ພັດທະນາໂຄງການໄຟຟ້າພະລັງງານຈາກກົງຫັນລົມຄື: ຂໍການສະໜອງທຶນໃຫ້ແກ່ນັກຮຽນ, ສຳຫຼວດກໍ່ສ້າງນ້ຳດື່ມ ນ້ຳໃຊ້, ພາຫະນະຊ່ວຍບ້ານ, ອຸປະກອນຮັບໃຊ້ຫ້ອງການ (ຄອມພິວເຕີ, ປຼິນເຕີ), ສ້ອມແປງຫ້ອງການບ້ານ, ສະໜອງຫວິດໃຫ້ປະຊາຊົນຜູ້ທີ່ຍັງບໍ່ທັນມີຫວິດຖ່າຍ.
- ສຳລັບການປົວແປງຮີດຄອງປະເພນີຂອງບ້ານທີ່ເຄີຍປະຕິບັດຜ່ານມາມູນຄ່າ: 3.344.000 ກີບ, (ລາຍລະອຽດມີບົດບັນທຶກຄັດຕິດພ້ອມ).

**2. ບ້ານດາກສະມໍ.**

ຖືກຜົນກະທົບຈາກຕົ້ນເສົາກົງຫັນລົມຈຳນວນ 3 ຕົ້ນ, ເຊິ່ງຜ່ານເຂດປ່າຜະລິດ ແລະ ປ່າຊົມໃຊ້ຂອງບ້ານນອກຈາກນັ້ນໃນເຂດກໍ່ສ້າງເສັ້ນທາງເຂົ້າຫາໂຄງການແມ່ນຖືກດິນທຳການຜະລິດຂອງປະຊາຊົນ ຈຳນວນ 6 ຄອບຄົວ ມີ 7 ຕອນດິນ, ທາງຄະນະກຳມະການຄະນະພາກລັດຂັ້ນແຂວງ, ເມືອງ ໄດ້ເຜີຍແຜ່ຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ພືນລະປູກ, ຕໍ່ອຳນາດການປົກຄອງບ້ານ ແລະ ຄອບຄົວຜູ້ທີ່ໄດ້ຮັບຜົນກະທົບເບື້ອງຕົ້ນມີ 6 ຄອບຄົວ, ກອງປະຊຸມໄດ້ເຫັນດີເປັນເອກະພາບຕາມຮ່າງຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ພືນລະປູກ.

- ➢ ຂໍ້ສະເໜີ ຈາກປະຊາຊົນ ແລະ ອຳນາດການປົກຄອງບ້ານ, ສະເໜີ ຕໍ່ ບໍລິສັດ ພັດທະນາໂຄງການໄຟຟ້າພະລັງງານຈາກກົງຫັນລົມຄື: ຂໍການກໍ່ສ້າງທໍ່ນ້ຳລິນເພື່ອໃຫ້ປະຊາຊົນຮັບໃຊ້, ສະເໜີຂໍກໍ່ສ້າງຕາຂ່າຍໄຟຟ້າເຂົ້າເຂດບ້ານຕັ້ງໃໝ່.
- ສຳລັບການປົວແປງຮີດຄອງປະເພນີຂອງບ້ານທີ່ເຄີຍປະຕິບັດຜ່ານມາມູນຄ່າ: 1.670.000 ກີບ, (ລາຍລະອຽດມີບົດບັນທຶກຄັດຕິດພ້ອມ).

**3. ບ້ານດາກຍົກ.**

ຖືກຜົນກະທົບຈາກຕົ້ນເສົາກົງຫັນລົມຈຳນວນ 2 ຕົ້ນ, ເຊິ່ງຜ່ານຕອນດິນລອມບ້ານ, ທາງຄະນະກຳມະການຄະນະພາກລັດຂັ້ນແຂວງ, ເມືອງ ໄດ້ເຜີຍແຜ່ຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ພືນລະປູກ, ຕໍ່ອຳນາດການປົກຄອງບ້ານ, ກອງປະຊຸມໄດ້ເຫັນດີເປັນເອກະພາບຕາມຮ່າງຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ພືນລະປູກ.

- ຂໍ້ສະເໜີ ຈາກປະຊາຊົນ ແລະ ອຳນາດການປົກຄອງບ້ານ, ສະເໜີ ຕໍ່ ບໍລິສັດ ພັດທະນາໂຄງການໄຟຟ້າພະລັງງານຈາກກົງຫັນລົມຄື: ສະເໜີ ຂໍນ້ຳບາດານ, ຊ່ວຍການຂົນສົ່ງຍົກຍ້າບ້ານ, ຂໍການຊ່ວຍສະໜັບສະໜູນຫ້ອງການບ້ານ.
- ສຳລັບການປົວແປງຮີດຄອງປະເພນີຂອງບ້ານທີ່ເຄີຍປະຕິບັດຜ່ານມາມູນຄ່າ: 1.060.000 ກີບ, (ລາຍລະອຽດມີບົດບັນທຶກຄັດຕິດພ້ອມ).

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

**4. ບ້ານດາກຊຶມ.**

ຖືກຜົນກະທົບຈາກຕົ້ນເສົາກົງຫັນລົມຈຳນວນ 6 ຕົ້ນ, ເຊິ່ງຜ່ານຕອນດິນລວມບ້ານທັງໝົດ, ທາງຄະນະກຳມະການຄະນະພາກລັດຂັ້ນແຂວງ, ເມືອງ ໄດ້ເຜີຍແຜ່ຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ຜົນລະປູກ, ຕໍ່ອຳນາດການປົກຄອງບ້ານ, ກອງປະຊຸມໄດ້ເຫັນດີເປັນເອກະພາບຕາມຮ່າງຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ຜົນລະປູກ.

- ຂໍ້ສະເໜີຈາກປະຊາຊົນ ແລະ ອຳນາດການປົກຄອງບ້ານ, ສະເໜີ ຕໍ່ ບໍລິສັດ ພັດທະນາໂຄງການໄຟຟ້າພະລັງງານຈາກກົງຫັນລົມຄື: ປົວແປງຮີດຄອງປະເພນີຂອງບ້ານທີ່ເຄີຍປະຕິບັດຜ່ານມາມູນຄ່າ: 4.500.000 ກີບ, (ລາຍລະອຽດມີບົດບັນທຶກຄັດຕິດພ້ອມ).

**5. ບ້ານດາກປາດູ.**

ຖືກຜົນກະທົບຈາກ ຕົ້ນເສົາກົງຫັນລົມຈຳນວນ 9 ຕົ້ນຖືກດິນລວມບ້ານທັງໝົດ ກອງປະຊຸມໄດ້ເຫັນດີເປັນເອກະພາບຕາມຮ່າງຫົວໜ່ວຍລາຄາຊົດເຊີຍຜົນກະທົບທີ່ດິນ ແລະ ຜົນລະປູກ.

➢ ຂໍ້ສະເໜີ ຈາກປະຊາຊົນ ແລະ ອຳນາດການປົກຄອງບ້ານ.

- ກາເຟໃຫຍ່ 2 ປີລົງມາລາຄາ 150.000 ກີບ/ຕົ້ນ, ແມ່ນເຫັນດີ.
- ກາເຟໃຫຍ່ 3-5 ປີຂຶ້ນໄປແມ່ນບໍ່ໃຫ້ຜົນຜະລິດ (ບໍ່ມີໝາກ), ແມ່ນ 350.000 ກີບ/ຕົ້ນ.
- ກາເຟໃຫຍ່ໃຫ້ໝາກ 450.000 ກີບ/ຕົ້ນ, ເຫັນດີໃຫ້ມີການປັບປຸງລາຄາ (ຕົ້ນໃຫຍ່ເກັບຜົນຜະລິດ).
- ກາເຟນ້ອຍ 2 ປີ, ລາຄາ 150.000 ກີບ/ຕົ້ນ.
- ກາເຟນ້ອຍ 3-5 ປີບໍ່ໃຫ້ໝາກ (ຜົນຜະລິດ), ແມ່ນ 400.000 ກີບ/ຕົ້ນ
- ກາເຟນ້ອຍ ຕົ້ນໃຫຍ່ໃຫ້ຜົນຜະລິດລາຄາ 525.000 ກີບ/ຕົ້ນ.

<u>ໝາຍເຫດ</u>: ທາງຄະນະກຳມະການຂັ້ນແຂວງ, ຂັ້ນເມືອງ ແລະ ບໍລິສັດ ຜູ້ພັດທະນາໂຄງການ ເຫັນດີມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ (ກອງເລຂາ), ເຮັດໜັງສືສະເໜີ ຫາ ພະແນກພະແນກກະສິກຳ ແລະ ປ່າໄມ້ແຂວງ ຢັ້ງຢືນລາຄາຫົວໜ່ວຍຜົນກະທົບຕົ້ນກາເຟ ເພື່ອໃຫ້ເໝາະສົມກັບສະພາບຕົວຈິງ.

- ຂໍ້ສະເໜີ ຈາກປະຊາຊົນ ແລະ ອຳນາດການປົກຄອງບ້ານ, ສະເໜີ ຕໍ່ ບໍລິສັດ ພັດທະນາໂຄງການໄຟຟ້າພະລັງງານຈາກກົງຫັນລົມຄື: ປົວແປງຮີດຄອງປະເພນີຂອງບ້ານທີ່ເຄີຍປະຕິບັດຜ່ານມາມູນຄ່າ: 2.134.000 ກີບ, (ລາຍລະອຽດມີບົດບັນທຶກຄັດຕິດພ້ອມ).

**6. ສຳລັບບ້ານ ດາກສຽດ, ດາກດໍ ແລະ ນ້ຳງອນເໜືອ:**

ເຊິ່ງບ້ານດັ່ງກ່າວໃກ້ ຄຽງກັບໂຄງການ ແລະ ບໍ່ຖືກຜົນກະທົບຈາກການກໍ່ສ້າງ, ຄະນະກຳມະການຂັ້ນແຂວງ, ເມືອງ ແລະ ບໍລິສັດຜູ້ພັດທະນາໂຄງການ ຮ່ວມກັບອຳນາດການປົກຄອງຂອງບ້ານ ເຫັນດີເອກະພາບ ປົວແປງຮີດຄອງຮີດຄອງ ເປັນລັກສະນະຄອບບອກເຈົ້າຖິ່ນ, ເຈົ້າຖານ, ຕາມຮີດຄອງຂອງບ້ານ.

**V. ຂໍ້ຫຍຸ້ງຍາກ:**

- ການຕິດຕໍ່ສື່ສານໂທລະສັບຍັງມີຄວາມຫຍຸ້ງຍາກເນື່ອງຈາກສັນຍານ ບໍ່ດີ.
- ຕອນດິນທີ່ປະຊາຊົນ ສ່ວນໃຫຍ່ແມ່ນບໍ່ມີໃບແຈ້ງ.

**VI. ພາກສະເໜີ:**

ຂໍທິດຊີ້ນຳຕື່ມເພື່ອນຳໄປຈັດຕັ້ງປະຕິບັດ ໃນການລົງວຽກໃນຂັ້ນຕໍ່ໄປເພື່ອໃຫ້ ຖືກຕ້ອງສອດຄ່ອງ ແລະ ໄດ້ຮັບຜົນສຳເລັດຕາມເປົ້າໝາຍ (ລາຍລະອຽດມີບົດບັນທຶກ ຄັດຕິດມາພ້ອມ).

ດັ່ງນັ້ນ, ຈຶ່ງລາຍງານໃຫ້ທ່ານຊາບ ແລະ ຮັບຮູ້ນຳດ້ວຍ.

(ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ)!.

| | |
|---|---|
| **ຢັ້ງຢືນຈາກຄະນະຊົດເຊີຍຜົນກະທົບຂັ້ນເມືອງ** | **(ກອງເລຂາ):** |
| **(ຮອງເຈົ້າເມືອງຊານໄຊ)** | **ຫົວໜ້າຂະແໜງນະໂຍບາຍ ແລະ ພະລັງງານ** |
| **ສາຍທະລາ ໂສທິດາ** | **ວັນນາ ແກ້ວມະນີວົງ** |

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT